ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****000*****

ກະຊວງການເງິນ

ເລກທີ 1408/ກງ

ນະຄອນຫລວງວຽງຈັນ, ວັນທີ 13 JUN. 2011

# ແຈ້ງການ

ເຖິງ: ບັນດາກະຊວງ, ອົງການຈັດຕັ້ງຂອງລັດ, ລັດວິສາຫາກິດ, ບຸກຄົນ, ນິຕິບຸກຄົນ ບັນດາຫົວໜ່ວຍທຸລະກິດຂາອອກ-ຂາເຂົ້າ

ເລື່ອງ: ການທົດລອງນໍາໃຊ້ລະບົບການບໍລິການແຈ້ງພາສີແບບອັດຕະໂນມັດ ຢູ່ດ່ານພາສີຂົວມິດຕະພາບ I ພາສີປະຈໍາເຂດ 5 .

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ80/ນຍ. ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມກົດໝາຍພາສີສະບັບເລກທີ 05/ສພຊ ລົງວັນທີ 20 ພຶດສະພາ 2005
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ 2181/ກງ. ລົງວັນທີ 24/09/2008 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນໍາໂຄງການປັບປຸງວຽກງານພາສີໃຫ້ທັນສະໄໝ.
- ອີງຕາມ ບົດລາຍງານຂອງກົມພາສີສະບັບເລກທີ 1830/ກພສ ລົງວັນທີ 8/6/2011

ເພື່ອຮັບປະກັນໃຫ້ການພັດທະນາລະບົບການບໍລິການແຈ້ງພາສີແບບອັດຕະໂນມັດ ( ອາຊີກູດາ ) ໃນໄລຍະທີ 2 ຄື ການທົດລອງນໍາໃຊ້ລະບົບ ສາມາດດໍາເນີນການ ໄປຢ່າງຄ່ອງຕົວ ແລະ ມີປະສິດທິຜົນສູງ.

ລັດຖະມົນຕີວ່າການກະຊວງການເງິນອອກແຈ້ງການດັ່ງນີ້ :

1. ເຫັນດີໃຫ້ກົມພາສີດໍາເນີນການທົດລອງນໍາໃຊ້ຂັ້ນຕອນການແຈ້ງພາສີແບບໃໝ່ ໂດຍການແຈ້ງຜ່ານລະບົບເອເລັກໂຕຣນິກ ທີ່ດ່ານພາສີຢູ່ຂົວມິດຕະພາບ I ນະຄອນຫລວງວຽງຈັນ ນັບແຕ່ ວັນທີ 1 ກໍລະກົດ 2011 ເປັນຕົ້ນໄປ.

2. ການແຈ້ງພາສີແບບໃໝ່ຈະເປີດໃຫ້ບໍລິການຢູ່ສູນຂໍ້ມູນຂ່າວສານທີ່ທາງກົມພາສີຈັດສັນໃຫ້.

3. ຜູ້ແຈ້ງພາສີສາມາດ ດຳເນີນການແຈ້ງພາສີແບບອັດຕະໂນມັດ ເຊິ່ງຕ້ອງໄດ້ປະກອບຂໍ້ມູນການແຈ້ງກ່ອນການຍື່ນເອກະສານໃຫ້ແກ່ເຈົ້າໜ້າທີ່ພາສີ ປະຈຳດ່ານ ເພື່ອຫຼີກລ້ຽງການສ້າງຄວາມຊັກຊ້າໃນການແຈ້ງພາສີ.

4. ມອບໃຫ້ກົມພາສີອອກບົດແນະນຳທາງດ້ານວິຊາການ ພ້ອມທັງເຜີຍແຜ່ໃຫ້ແກ່ເຈົ້າໜ້າທີ່ພາສີ, ຂະແໜງການຂອງລັດທີ່ກ່ຽວຂ້ອງ ແລະ ພາກສ່ວນທຸລະກິດ ຢ່າງທົ່ວເຖິງ.

5. ແຈ້ງການສະບັບນີ້ ຈະເລີ່ມຈັດຕັ້ງປະຕິບັດນັບແຕ່ວັນທີ 01 ເດືອນກໍລະກົດ 2011 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ສົມດີ ດວງດີ